ສຸນທະຣິຍະພາບຂອງພາສາລາວ ຄືຈິດວິນຍານສາກົນແຫ່ງວັດທະນະທັມລາວ



# ຊີວິດກັບບົດເພງ

ພຣະອາຈາຣຍ໌ເນືອງພິລັກ ໄຊຕິທອບ
ດາວວຽງ ບຸດບາໂຄ

ດາວວຽງວ່າ

- ພອນສະຫວັນບາງຄັ້ງ
  ບໍ່ທັນທຽບພອນສະແຫວງ
- ພອນສະແຫວງບວກໃສ່ພອນສະຫວັນ
  ໝັ່ນພຽນຂຽນຄືນ
- ເກີດເປັນຄົນຈຸດໝາຍມຸ້ງ
  ສານຝັນຢາກເປັນໜຶ່ງ
- (໔x໔).(໕+໙)=   ເຂົາຊິເອີ້ນນັກປະພັນ
  ເອງດອກ!!!

ສູນທະຣິຍະພາບຂອງພາສາລາວ ຄືຈິດວິນຍານສາກົນແຫ່ງວັດທະນະທັມລາວ

Novice Bounsong Keobouasay

ສ.ພ ສົ່ງ ແກ້ວບົວສາຍ.

ບຸນສົ່ງ ແກ້ວບົວສາຍ
ສ. ສາຍບຸນມີ

29 FEB 2009

# ຊີວິດກັບບົດເພງ

ພິມຄັ້ງທີ ໑ ປີ ໒໐໐໖/໒໕໔໙

ທະບຽນພິມ................................................

ພຣະອາຈານຣ໌ເບືອງພິລັກ ໂຊຕິທອນ
ດາວວຽງ ບຸດບາໂຄ

# ບົດເພງຊີວິດ

• ພອນສະຫວັນ ປະຊັນກ່ຽວພອນສະແຫວງ
ຊີວິດມະນຸດ ເໝືອນກັບການສະແດງ
ມີທາງປິດມີທາງເປີດ ເໝືອນກັບນັກປະພັນແຕ່ງ
ຍ່ອມສາມາດພິກແພງ ຫຼືຈະແກ້ງທຳຕາມເຫດການ...

ໜັງສື "ຊີວິດກັບບົດເພງ" ເຫຼັ້ມນີ້ ເປັນບາງບົດຮຽນທີ່ຂຽນຂຶ້ນຕາມປະສົບການຈິງ ເຊິ່ງຜູ້ຂຽນໄດ້ປະຕິບັດຈົນປະສົບຜົນເຮັດມາແລ້ວບົນຖະໜົນສາຍນີ້ ກ່າວໄດ້ວ່າເປັນໜັງສືສຳຄັນຫຼາຍ ສຳລັບຜູ້ມີຄວາມໄຝ່ຝັນຢາກເປັນນັກປະພັນ ແຕ່ບໍ່ເຄີຍມີບົດຮຽນດ້ານນີ້ມາກ່ອນ ຜູ້ຂຽນໄດ້ກ່າວເຖິງຊີວິດໜຶ່ງທີ່ບໍ່ມີຄວາມຮູ້ດ້ານເພງມາກ່ອນ ແຕ່ກໍປະພັນເພງໄດ້ ອັນນີ້ຄືພອນສະຫວັນປະຊັນກັບພອນສະແຫວງ ທີ່ເຊື່ອງຊ້ອນຢູ່ໃນສ່ວນເລິກຂອງມະນຸດທຸກຄົນ ມີແຕ່ຜູ້ທີ່ສຶກສາຄົ້ນຄວ້າເທົ່ານັ້ນຈະນຳອອກມາໃຊ້ໃຫ້ເກີດປະໂຫຍດໄດ້ ແລະກໍແມ່ນຕົນເອງເທົ່ານັ້ນເປັນຜູ້ຮູ້ແລະເຂົ້າໃຈມັນ ເມື່ອຜູ້ອ່ານໄດ້ອ່ານໜັງສືເຫຼັ້ມນີ້ແລ້ວ ອາດສາມາດນຳເອົາວິທີນີ້ໄປຄົ້ນຄວ້າຈາກພະລັງຂອງທ່ານເອງ ຄົງຊິເຫັນຊ່ອງທາງອັນສະຫວ່າງສະໄຫວ ທີ່ເຕັມໄປດ້ວຍດອກໄມ້ແລະສຸນທະຣິຍະພາບຂອງສຽງດົນຕຣີໃນຫົວໃຈທ່ານ, ເຊື່ອແນ່ວ່າທຸກຄົນມີດົນຕຣີໃນຫົວໃຈ ເຖິງວ່າຮ້ອງເພງບໍ່ເປັນເລີຍ ສຳລັບຜູ້ທີ່ມີຄວາມຮູ້ດ້ານດົນຕຣີ ຫຼືບາງຄົນທີ່ຮູ້ເລື່ອງການແຕ່ງກະວີກາບກອນແລ້ວ ເມື່ອໄດ້ອ່ານໜັງສືເຫຼັ້ມນີ້ແລ້ວ ຄົງຈະເປັນບົດຮຽນນ້ອຍໆອີກບົດໜຶ່ງ ທີ່ເຕັມໄປດ້ວຍສາຣະປະໂຫຍດເພີ່ມຕື່ມພະລັງສະຕິປັນຍາ ແລະພະລັງໃຈທີ່ທ່ານມີຢູ່ ກໍອາດເປັນໄປໄດ້ໃຜຊິຮູ້.

ໃນປຶ້ມເຫຼັ້ມນີ້ ນອກຈາກບົດຮຽນໃນການສຶກສາວິທີແຕ່ງເພງ ແລະຕົວຢ່າງເພງແລ້ວ ຍັງມີບົດຄົ້ນຄວ້າຮຽບຮຽງວິຊາການວ່າດ້ວຍ **"ສີລະປະການໃຊ້ພາສາລາວໃນການແຕ່ງເພງ"**ເພີ່ມຕື່ມອີກ ເພື່ອໃຫ້ຜູ້ສຶກສາສາມາດນຳເອົາໄປປະຍຸກໃຊ້ ໃນການແຕ່ງຂອງທ່ານທຸກຮູບແບບໄດ້ບໍ່ສະເພາະແຕ່ເພງເທົ່ານັ້ນ.

ຢ່າງໃດກໍຕາມ ໜັງສືເຫຼັ້ມນີ້ເປັນພຽງບົດຮຽນບົດໜຶ່ງ ຈາກປະສົບການຂອງບຸກຄົນໆໜຶ່ງ ອາດຊິເປັນຄັງຄວາມຮູ້ໜຶ່ງ ທີ່ທ່ານສາມາດສຶກສາຄົ້ນຄ້ວາ ເພື່ອຄວາມເປັນໜຶ່ງຂອງທ່ານໄດ້ ບາງທີທ່ານອາດເປັນຜູ້ໜຶ່ງທີ່ສາມາດໄຂປິດສະໜາພາສິດບູຮານ ທີ່ວ່າ "ທຽນຍ່ອມເຜົາຕົນເພື່ອແສງສະຫວ່າງຂອງຄົນອື່ນ" ອາຕະມາເຊື່ອຢ່າງນັ້ນຈິງໆ.

**ວັດວິຈິດທັມມາຣາມ ບ້ານວຽງຈະເຣີນ, ວັນທີ ໖ ກັນຍາ ໒໐໐໖**

ພຣະອາຈາຣຍ໌ເນືອງພິລັກ ໄຊຕິທອນ









# ສາລະບັນ


| ເລື່ອງ | ໜ້າ |
|---|---|
| - ບົດເພງຊີວິດ | ກ |
| - ຄວາມເຫັນຂອງສະມາຄົມນັກປະພັນລາວ | ຂ |
| - ຊີວິດກັບບົດເພງ | ໑ |
| - ໂຄງຮ່າງຂອງການແຕ່ງເພງ | ໑໖ |
| - ບົດເພງຕົວຢ່າງ | |
| ຕັກບາດສະຫວັນ | ໑໗ |
| ຈົດໝາຍບໍ່ກ້າສົ່ງ | ໑໙ |
| ໄປທ່ຽວເມືອງໂຊງ | ໔໐ |
| ຜູ້ຊາຍປາຍແຖວ | ໔໑ |
| ອີກາໃນເມືອງຫົງ | ໔໒ |
| - ສິລະປະການໃຊ້ພາສາລາວໃນການແຕ່ງເພງ | ໔໓ |
| ບົດເພງແມ່ນການສື່ສານປະເພດໜຶ່ງທີ່ໃຊ້ພາສາ | ໔໗ |
| ການຮູ້ຈັກເລືອກໃຊ້ຄຳໃນການແຕ່ງເພງ | ໔໙ |
| ຄວາມໝາຍຂອງຄຳ | ໕໐ |
| ລະດັບຂອງຄຳ | ໕໑ |
| ການໃຊ້ຄຳໃນການຂຽນ | ໕໖ |
| - ພາບປະກອບ | ໑໓,໔໕,໕໓,໕໗ |






ຂໍ້ຄິດຄຳຄົມ........

- ການເວລາເປັນສິ່ງສຳຄັນສຸດສຳລັບມະນຸດ, ດັ່ງນັ້ນ ເວລາຈຶ່ງບໍ່ມີການຊື້ຂາຍ, ຄົນເອງກໍສຳຄັນເທົ່າກັບເວລາ ຄົນຈຶ່ງບໍ່ມີການຊື້ຂາຍ ແລະບໍ່ສາມາດຂາຍຕົນເອງໄດ້ ບໍ່ວ່າທາງກົງຫຼືທາງອ້ອມ.

*ຂຽນທີ່ ຫ້ອງການສູນກາງອົງການພຸດທະສາສນາສັມພັນລາວ ວັນທີ ໑໘ ຕຸລາ ໑໙໗໑*

- ມິດແທ້ປຽບເໝືອນກ້ອນຄຳ ແລະແກ້ວມະຫານິນທີ່ຣາຄາເລີດ, ຖ້າຫາກມິດນັ້ນມີອຸດົມຄະຕິອັນດຽວກັນ, ມີຄວາມສຳພັນສອດຄ່ອງກັນ ຍິ່ງມີຣາຄາກວ່າສິ່ງໃດໃນໂລກ.

*ຂຽນທີ່ກຸງເທບ, ຄາວໄປທ່ອງທ່ຽວກັບເພື່ອນໆ ປີ ໑໙໗໖*

- ເພື່ອນທີ່ບໍ່ທັນຮູ້ໃຈກັນ ຢ່າຟ້າວມອບໃຈໃຫ້ໝົດໃຈ, ຖ້າເພື່ອນທີ່ຮູ້ໃຈກັນແລ້ວ ຈຶ່ງກຽມໃຈເພື່ອມອບໃຈໃຫ້ແກ່ກັນແລະກັນ.

*ຂຽນທີ່ ເມືອງທ່າແຂກ ໑໙໗໖*

- ສັດຕູຖ້າບໍ່ຮູ້ໃຈ ຈຶ່ງກຽມໃຈເພື່ອປ້ອງກັນ, ຖ້າສັດຕູທີ່ຮູ້ໃຈກັນມາກ່ອນແລ້ວ ຈຶ່ງເອົາໃຈອອກຫ່າງ.

*ຂຽນທີ່ ສະຫວັນນະເຂດ ໑໙໗໖*

- ຄຳໜັກ ໑໐ ກິໂລ, ຫີນໜັກ ໑໐ ກິໂລ ເຫດໃດມູນຄ່າຂອງມັນຈຶ່ງຕ່າງກັນ.

*ຂຽນທີ່ ເມືອງມູນລະປະໂມກ ໑໙໗໖*

- ອັນວັດຖຸອື່ນໆ ທີ່ຮູ້ວ່າມັນໜັກ ກໍຕໍ່ເມື່ອເຮົາໄດ້ຍົກມັນໄວ້ໃນມືແລ້ວ.

*ຂຽນທີ່ບ້ານທ່ານເປືອຍ ປະເທດຂະເໝນ ໑໙໗໖*

- ບຸກຄົນຍ່ອມກ້າວເດີນໄປຢ່າງອິດສະຫຼະບົນຄວາມຖືກຕ້ອງເປັນທັມ ບໍ່ມີໃຜມາບັງຄັບ, ຖ້າບໍ່ເປັນດັ່ງທີ່ກ່າວແລ້ວ ກໍກາຍເປັນຄົນໄຮ້ອິດສະຫຼະພາບທາງຄວາມຄິດ.

*ຂຽນທີ່ເມືອງແປກ ແຂວງຊຽງຂວາງ ໑໙໗໘*

- ບູຣຸດຜູ້ຍິ່ງໃຫຍ່ຂອງໂລກບາງຄັ້ງກໍບໍ່ໄດ້ເກີດຢູ່ປະສາດຣາຊະວັງສະເໝີໄປ ມະນຸດຜູ້ມີພັນທະທີ່ສຳຄັນຕໍ່ໂລກ ທີ່ສາມາດມາດສ້າງໃຫ້ຕົນ ແລະບຳເພັງປະໂຫຍດໃຫ້ມະນຸດຈົນປະສົບສຸກນັ້ນ ຍ່ອມມີຈິດໃຈມານະທີ່ເປັນເລີດ.

*ຂຽນທີ່ ພິພິດທະພັນບ້ານເກີດລຸງໂຮ່ ແງະອານ ຫວຽດນາມ ໒໐໐໘*

- ຄວາມຮ້ອນ ຫຼືຄວາມເຢັນຍ່ອມນຳຜົນມາໃຫ້ມະນຸດສະເໝີກັນ ຖ້າຫາກຮ້ອນ ຫຼືເຢັນໂດຍທັມມະຊາດ ມະນຸດຜູ້ຫາກປັບຕົວຂອງຕົນຕາມສະພາວະຢູ່ໄດ້ຍ່ອມຈັກຮູ້ຜົນ, ຫາກມະນຸດໃດບໍ່ສາມາດປັບຕົວໄດ້ມະນຸດນັ້ນກໍປຣາໄຊ.

*ຂຽນທີ່ ບໍ່ນ້ຳຮ້ອນເມືອງຄຳ ຊຽງຂວາງ ໑໐ ມີນາ ໑໙໗໘*



# ໑໑ ຊີວິດກັບບົດເພງ

ດາວວຽງ ບຸດນາໂຄ

ເຄີຍຕັ້ງຄຳຖາມ ຖາມໂຕເອງແບບງຶງໆ ເຊິ່ງ ຕັ້ງຫຼາຍເທື່ອຫຼາຍທີວ່າ ຕົນເອງຍ່າງໂຊເຊ ຫຼົງທາງເຂົ້າມາສູ່ ແວດວົງນັກປະພັນເພງໄດ້ ຢ່າງໃດ? ທັງໆທີ່ວິຊາການ, ທິດສະດີການດົນຕີ ແລະການປະພັນເພງ ກໍບໍ່ໄດ້ຜ່ານໂຮງຮຽນມາ ກ່ອນ ເວົ້າເຖິງໂໜດເພງ ຫຼືຊອນແຟ ທີ່ພາສາ ຄົນທົ່ວໄປຮຽກກັນວ່າ "ໝາກຖົ່ວງອກ" ນັ້ນກໍ ອ່ານບໍ່ອອກຂຽນບໍ່ຖືກ ມັນມືດຕຶບປານແສງໄຟ ກະບອງມອດກະບໍ່ປານ.







|ຄະນະບໍລິຫານສະມາຄົມນັກປະພັນລາວ ຊຸດທີ່ ១|

ອີກຢ່າງໜຶ່ງເວົ້າເຖິງຊີກຊິ້ນເຄື່ອງດົນຕຣີ ນັບຕັ້ງແຕ່ເຄື່ອງດົນຕຣີພື້ນເມືອງເຊັ່ນ: ແຄນ, ກະຈັບປີ່, ຊໍ່ຍ, ຊໍ່, ລະນາດ...ຕະຫຼອດເຖິງເຄື່ອງດົນຕຣີສາກົນກີຕາ, ຄີບອດ, ເບສ, ແຊັກໂຊໂຟນ....ບອກໄດ້ເຕັມປາກເລີຍວ່າ ບໍ່ເຄີຍຫຼິ້ນເຄື່ອງດົນຕຣີເຫຼົ່ານີ້ເປັນແມ່ນແຕ່ຊະນິດດຽວ ສິ່ງທີ່ພໍໆເຮັດໄດ້ນຳເຂົາແນ່ກໍໄດ້ແຕ່ງືກຫົວ ຫຼືຕົບມືໄປຕາມຈັງຫວະບາດກອງກໍຄືທຳນອງເພງ ເທົ່ານັ້ນລະ.

**ຖ້າຢ່າງນັ້ນ ກ້າວມາເຂົ້າເປັນນັກປະພັນໄດ້ຢ່າງໃດ?**

**ຍັງຊອກຫາຄຳຕອບບໍ່ທັນພໍ້ເທື່ອ?**

ອາດເປັນຄວາມໂຊກດີ ທີ່ມີຖິ່ນຖານບ້ານກຳເນີດຢູ່ແຜ່ນດິນສີພັນດອນດິນແດນອູ່ເຂົ້າອູ່ປາ, ອູ່ອາລະຍະທັມທີ່ມີພາບວິວ ທິວທັດທຳມະຊາດທີ່ສວຍສົດງົດງາມຈົນເປັນທີ່ເລື່ອງລືນັ້ນ ກໍຄືນ້ຳຕົກຕາດຄອນພຣະເພງທີ່ມີໄມ້ມະນີໂຄດສາມງ່າ ຢືນຍິ້ມສະງ່າຕ້ອນຮັບຜູ້ຄົນມາແວ່ຢາມ ຈາກນັ້ນຍັງມີນ້ຳຕົກຕາດ

ສົມພຣະນົດ-ຫຼີ່ຜີທີ່ມີຄວາມສູງຊັນເຖິງ ໑໔ ແມັດ ຖ້າຢາກໄປຊົມປາຂ່າ(ປາໂລມານ້ຳຈືດ)ແມ່ໄປທາງບ້ານເວີນຄາມ ໃຕ້ສຸດຂອງປະເທດລາວທີ່ມີຊາຍແດນຕິດຕໍ່ກັບປະເທດກຳປູເຈັຍ, ບໍ່ພຽງແຕ່ເທົ່ານັ້ນດິນແດນສີພັນດອນ ຍັງມີສົມຍານາມວ່າ "ແດນນັກປາດ ຊາດນັກກະວີ ດິນແດນແຫ່ງກາບກອນຜະຫຍາພາສິດ ດິນແດນຕົ້ນຕຳນານລຳສີພັນດອນ, ລຳໂສມທີ່ລີຊີ" ແລະກໍແມ່ນດິນແດນແຫ່ງນີ້ເອງ ໄດ້ກໍ່ກຳເນີດນັກປາດອາຈານທີ່ມີຊື່ສຽງກ່ຽວກັບການຂຽນບົດກະວີກາບກອນສີມີແຖວໜ້າເຊັ່ນ: ລູງອິນທິຣາດ ພົມມະສານ ບ້ານຫົວໂຂງພຣະໃຫຍ່, ຜູ້ຂຽນຄຳກອນຄອນພຣະເພງ-ຫຼີ່ຜີ ແລະປະວັດເຈົ້າເມືອງອຸທຸມ, ລູງມະຫາແກ້ວ ຜູ້ຂຽນຄຳກອນເຂົ້າໃນຫຼັກສູດການສຶກສາຂັ້ນປະຖົມ ແລະມັດທະຍົມ ໃນສະໄໝລາວຍັງເປັນຫົວເມືອງຂຶ້ນຂອງຝຣັ່ງ, ລູງອຸເທນທະມາລາ, ລູງບຸນສິງ ອຸເທນທະມາລາ ແລະຍັງມີອີກຫຼາຍທ່ານທີ່ມີຊື່ສຽງ.

ສະໄໝໄວເດັກ ເຄີຍຍ່າງຕິດກົ້ນອ້າຍເອື້ອຍໄປຂົນຫີນ, ຂົນຊາຍເຂົ້າວັດ ຊີວິດບ້ານນອກຊົນນະບົດບໍ່ມີໄຟຟ້າໄຕ້ ເຈົ້າອະທິການວັດຈຳຕ້ອງໃຊ້ຕະກຽງມົ໊ງຊົງໃຫ້ແສງສະຫວ່າງ, ຄຳວ່າມົ໊ງຊົງມາຈາກພາສາຝຣັ່ງວ່າ Le Manchon ເຂົ້າມາມີບົດບາດພ້ອມຝຣັ່ງຍຶດຄອງລາວເປັນຫົວເມືອງຂຶ້ນ, ຕະກຽງມົ໊ງຊົງຈະມີຄວາມທັນສະໄໝກວ່າແສງໄຟກະບອງ ຫຼືແສງໄຟຕະກຽງທຳມະດາຈະມີຄວາມໃກ້ຄຽງກັບແສງຂອງໄຟຟ້າ ແຕ່ຕະກຽງມົ໊ງຊົງໃຊ້ນ້ຳມັນກາດຫຼໍ່ລ້ຽງ, ບາງຄົນພັດມີຄວາມເຫັນວ່າ ຕະກຽງມົ໊ງຊົງຜູ້ຜລິດກ່ອນໝູ່ແມ່ນຊາວຈີນ ສຳລັບຄົນບ້ານນອກຢ່າງຊາວບ້ານພວກຂ້ອຍ ພວກເຮົາບໍ່ສົນໃຈດອກວ່າຕະກຽງມົ໊ງຊົງມັນຊິເປັນຂອງເຈັກ ຂອງຈີນ ຫຼືຂອງຝຣັ່ງດັ່ງໂມ ຫຼືຂອງຂະເໝນເຈນຈາມ ພວກເຂົາສົນໃຈແຕ່ວ່າ ຕະກຽງມົ໊ງຊົງມັນໃຫ້ແສງສະຫວ່າງພໍໄດ້ຂົນຫີນ, ຂົນຊາຍເຂົ້າວັດ ເພື່ອວ່າຈະໄດ້ບຸນໄດ້ກຸສົນເຕັມປ່ຽມບໍຣິບູນກໍພໍແລ້ວ.

ຫ່າງຈາກນີ້ຄືນຫຼັງຫຼາຍກວ່າ ໔໐ ປີ ງານບຸນວັດ ຫຼືວ່າຍາມກາງຄືນ



# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ